ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເລກທີ: 064 -.-.-/ລອທ

ນະຄອນຫຼວງວຽງຈັນ, ວັນທີ 14 ພຶດສະພາ 2019

ໜັງສືແຈ້ງກ່ຽວກັບການຄາດຄະເນກຳໄລຕໍ່ຮຸ້ນ

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື

ເລື່ອງ : ບົດລາຍງານການຊີ້ແຈງກ່ຽວກັບການຄາດຄະເນກຳໄລຕໍ່ຮຸ້ນ.

- ອີງຕາມຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນເລກທີ 02/ຄຄຊ, ລົງວັນທີ 09/02/2018

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືໂອກາດເຮັດໜັງສືການຊີ້ແຈ້ງກ່ຽວກັບການຄາດຄະເນ ກຳໄລຕໍ່ຮຸ້ນ ຕາມມາດຕາທີ 9 ໃນຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນຂອງບໍລິສັດທີ່ມີຈຸດປະສົງ ຈຳໜ່າຍຮຸ້ນ ເລກທີ02/ຄຄຊ ນະຄອນຫຼວງວຽງຈັນ ວັນທີ 09 ກຸມພາ ປີ 2018 ຂອງຄະນະກຳມະການຄຸ້ມຄອງຊັບ.

ຈາກບົດລາຍງານກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2018 ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ຕາມວາລະ ກອງປະຊຸມ ວາລະທີ1 ພິຈາລະນາຮັບຮອງບົດລາຍງານດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ຊຶ່ງກອງປະຊຸມ ຜູ້ຖືຮຸ້ນ ປະຈຳປີ 2018 ໄດ້ພິຈາລະນາຮັບຮອງການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ໂດຍມີຄະແນນ ສຽງເຫັນດີ ຮ້ອຍສ່ວນຮ້ອຍຂອງຈຳນວນຮຸ້ນທີ່ເຂົ້າປະຊຸມຄັ້ງນີ້ ໂດຍມີລາຍລະອຽດລາຍຮັບທີ່ຄາດຄະເນກຳໄລຕໍ່ຮຸ້ນ ປະຈຳປີ 2018 ທີ່ຄາດເຄື່ອນມີດັ່ງຕໍ່ໄປນີ້:

1. ໃນປີ 2018 ບໍລິສັດຕັ້ງເປົ້າລາຍຮັບ ການບໍລິການສວນ ແລະ ເບ້ຍປາມນ້ຳມັນ ດ້ວຍມູນຄ່າ 14.850 ລ້ານ ກີບ, ແຕ່ຍອດລາຍຮັບປະຕິບັດໄດ້ຕົວຈິງເທົ່າກັບ 1.896 ລ້ານກີບ ຊຶ່ງຕ່ຳກ່ວາເປົ້າລາຍຮັບທີ່ຕັ້ງໄວ້ ເທົ່າກັບ 12.954,24 ລ້ານກີບ, ຫຼື ເທົ່າກັບ 87,23 ສ່ວນຮ້ອຍ ເຫດຜົນເນື່ອງຈາກວ່າບໍລິສັດໄດ້ ກັ້ນຈຳນວນຕົ້ນ ປາມໄວ້ເພື່ອຮອງຮັບເນື້ອທີ່ສຳປະທານ ທີ່ບໍລິສັດໄດ້ຮັບອະນຸຍາດຈາກລັດຖະບານ ທີ່ເມືອງຕະໂອ້ຍ ແຂວງ ສາລະວັນ ເຮັດໃຫ້ຍອດຈຳໜ່າຍເບ້ຍປາມຫຼຸດລົງ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

2. ໃນປີ 2018 ບໍລິສັດຕັ້ງເປົ້າໃນການຜະລິດສິນຄ້າເພື່ອຈຳໜ່າຍ.

   2.1 ຕັ້ງເປົ້າລາຍຮັບໃນການຜະລິດ ແລະ ຈຳໜ່າຍສິນຄ້າປະເພດນ້ຳມັນກາຊອນຊີວະພາບ B5 ດ້ວຍມູນຄ່າ 51.000 ລ້ານກີບ, ແຕ່ຍອດລາຍຮັບຈິງປະຕິບັດໄດ້ເທົ່າກັບ 34.364,91 ລ້ານກີບ ຊຶ່ງຕ່ຳກ່ວາເປົ້າລາຍຮັບທີ່ຕັ້ງໄວ້ ເທົ່າກັບ 16.635,09 ລ້ານກີບ ຫຼື ເທົ່າກັບ 32,62 ສ່ວນຮ້ອຍ, ເຫດຜົນທີ່ຍອດລາຍຮັບຫຼຸດລົງ ເນື່ອງຈາກວ່າ ຈຳນວນໂຄຕ່າ (Quota) ໃນການນຳເຂົ້າວັດຖຸດິບ (ນ້ຳມັນກາຊອນ B0 ທີ່ນຳເຂົ້າມາປະສົມ) ໄດ້ມາຈຳນວນຈຳກັດ. ນອກຈາກນີ້ ບໍລິສັດຍັງມີການຈຳໜ່າຍ ນ້ຳມັນກາຊອນຊີວະພາບ B100 ໃຫ້ກັບລູກຄ້າທີ່ມີຄວາມຕ້ອງການເອົາໄປນຳໃຊ້ເອງຈຳນວນໜຶ່ງ ມູນຄ່າ 204,55 ລ້ານກີບ.

   2.2 ຕັ້ງເປົ້າລາຍຮັບໃນການຜະລິດ ແລະ ຈຳໜ່າຍສິນຄ້າ ປະເພດ ປຸ໋ຍ ດ້ວຍມູນຄ່າ 21.648 ລ້ານກີບ ແຕ່ຍອດລາຍຮັບຈິງຂອງບໍລິສັດ ປະຕິບັດໄດ້ເທົ່າກັບ 621,30 ລ້ານກີບ ຊຶ່ງຕ່ຳກວ່າເປົ້າລາຍຮັບ ເທົ່າກັບ 21.026,7 ລ້ານກີບ ຫຼື ເທົ່າກັບ 97,13 ສ່ວນຮ້ອຍ, ເຫດຜົນເນື່ອງຈາກບໍລິສັດຕັດສິນໃຈຢຸດການນຳເຂົ້າຊື່ອຄາວເນື່ອງຈາກແມ່ປຸ໋ຍມີຕົ້ນທຶນທີ່ສູງ ຈຶ່ງສົ່ງຜົນໃຫ້ຍອດຂາຍຕ່ຳກວ່າເປົ້າໝາຍ.

   2.3 ຕັ້ງເປົ້າລາຍຮັບໃນການຜະລິດ ແລະ ຈຳໜ່າຍສິນຄ້າປະເພດນ້ຳມັນປາມດິບ ດ້ວຍມູນຄ່າ 2.520 ລ້ານກີບ ແຕ່ຍອດລາຍຮັບຈິງປະຕິບັດໄດ້ ມີມູນຄ່າເທົ່າກັບ 4.100,74 ລ້ານກີບ ຊຶ່ງສູງກ່ວາເປົ້າລາຍຮັບທີ່ຕັ້ງໄວ້ ເທົ່າກັບ 1.580,74 ລ້ານກີບ ຫຼື ເທົ່າກັບ 62,73 ສ່ວນຮ້ອຍ, ເຫດຜົນເນື່ອງຈາກວ່າມີຄວາມຕ້ອງການຂອງຕະຫຼາດໃນການຊົມໃຊ້ນ້ຳມັນປາມດິບເພີ່ມຂຶ້ນ ຈຶ່ງສົ່ງຜົນໃຫ້ຍອດຂາຍສູງກວ່າເປົ້າຂາຍ.

3. ໃນປີ 2018 ບໍລິສັດຕັ້ງເປົ້າລາຍຮັບໃນການຈຳໜ່າຍສິນຄ້າສຳເລັດຮູບ ປະເພດນ້ຳມັນພືດ (Cooking oil) ແລະ ນ້ຳໝາກພ້າວ ມູນຄ່າເທົ່າກັບ 12.367,08 ລ້ານກີບ ແຕ່ຍອດລາຍຮັບຈິງຂອງບໍລິສັດມູນຄ່າເທົ່າກັບ 4.018,05 ລ້ານກີບ ຊຶ່ງຕ່ຳກວ່າເປົ້າລາຍຮັບທີ່ຕັ້ງໄວ້ ເທົ່າກັບ 8.349,03 ລ້ານກີບ ຫຼື ເທົ່າກັບ 67,51 ສ່ວນຮ້ອຍ ເຫດຜົນເນື່ອງຈາກວ່າ ບໍລິສັດຕັດສິນໃຈຢຸດການນຳເຂົ້າຊື່ອຄາວເນື່ອງຈາກມີຕົ້ນທຶນໃນການນຳເຂົ້າສູງ, ດັ່ງນັ້ນໃນຊ່ວງທ້າຍປີ 2018 ບໍລິສັດຈຶ່ງນຳເຂົ້າຜະລິດຕະພັນໃຫມ່ທີ່ມີກຳໄລຕໍ່ໜ່ວຍສູງກວ່ານ້ຳມັນພືດ ໄດ້ແກ່: ແປ້ງນົວ ໂດຍມີຍອດຈຳໜ່າຍເທົ່າກັບ 193,08 ລ້ານກີບ ແລະ ເມັດພັນສາລີໂດຍມີຍອດຈຳໜ່າຍເທົ່າກັບ 124,09 ລ້ານກີບ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ຈາກປັດໄຈດັ່ງກ່າວ ຈຶ່ງເຮັດໃຫ້ການຄາດຄະເນກຳໄລສຸດທິ ໃນປີ 2018 ທີ່ບໍລິສັດຕັ້ງເປົ້າໝາຍໄວ້ມູນຄ່າປະມານ 7.184,24 ລ້ານກີບ ແລະ ຈະມີກຳໄລຕໍ່ຮຸ້ນເທົ່າກັບ 89,80 ກີບ, ມີການຄາດເຄື່ອນຈາກກຳໄລສຸດທິຂອງບໍລິສັດປະຈຳປີ 2018 ທີ່ປະຕິບັດໄດ້ພຽງແຕ່ 613,97 ລ້ານກີບ ແລະ ມີກຳໄລຕໍ່ຮຸ້ນເທົ່າກັບ 7 ກີບ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ